# ເມັຍທີ່ຮັກ

ເນື້ອຮ້ອງ ແລະ ທຳນອງ ໂດຍ : ວັນພິລາ ສ.ຜາບມີໄຊຍ໌

1- ເມັຍເອີຍ ເມັຍຮັກ
ຮັກຊື່ງໃຈໜັກ ອ້າຍຮັກພຽງເມັຍຄົນດຽວ
ນ້ອງຄືແສງໄຟ ສ່ອງທາງໄປໃຫ້ອ້າຍຍຶດໝັ່ນຽວ
ຮັກເມັຍ ບໍ່ມີບິດບ້ຽວ ຮັກນ້ອງຄົນດຽວ ບໍ່ເຄີຍບິດເບືອນ

2- ເມັຍເອີຍ ເມັຍອ້ອນ
ທຸກຄືນ ທຸກວັນ ອ້າຍມີນ້ອງນັ້ນເປັນເພື່ອນ
ຄວາມຮັກຂອງເຮົາ ປຽບດວງດາວຄູ່ຄຽງເດືອນ
ນ້ອງນັ້ນເປັນແມ່ສີເຮືອນ ຄອຍຕັກເຕືອນບອກສອນລູກຂອງເຮົາ

R ຍາມໃດ ມີທຸກ ຣະທົມໝອງເສົ້າ
ມີເມັຍຄອຍເຝົ້າເອົາໃຈ ຄວາມເສົ້າກໍຫາຍ
ຍາມເຮົາສຸຂສັນ ເບີກບານຮ່ວມກັນເລື້ອຍໄປ
ແບ່ງຄວາມສຸຂທຸກໃຫ້ກຳລັງໃຈ ຈະດີຫລືຮ້າຍບໍ່ອາຍໜວງຫາ

3- ເມັຍເອີຍ ເມັຍແກ້ວ
ຊື່ງໃຈ ເຈົ້າແລ້ວ ເມັຍແກ້ວຍອດກັລຍາ
ເພື່ອຮັກຍືນຍົງ ຢູ່ດຳຣົງຄູ່ດິນ ແລະ ຟ້າ
ເທີດທູນຮັກທີ່ລ້ຳຄ່າ ໝັ້ນໃນສັດທາຮັກເຮົາຕລອດໄປ

ຈົບ

ປະພັນ ວັນທີ 25 - 12 - 1985